**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 02 ເດືອນຕຸລາ 2022 (10-02-2022 )**

## ຄວາມເຊື່ອສະແດງອອກໃນການຜະເຊີນໜ້າກັບສັດຕູ

*ແມ່ນຫຍັງຄືສິ່ງທີ່ທ່ານເຄີຍຕໍ່ສູ້ກັບຍາມເປັນເດັກນ້ອຍ?*

**ຈຸດສໍາຄັນໃນບົດຮຽນ:** ທ່ານສາມາດຢືນຢູ່ໃນພຣະຄຣິດຢ່າງມີໄຊຊະນະເໜືອບາບ,ໂລກ, ແລະ ຊາຕານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ບັນດາຜູ້ນໍາໃນພະແນກອະນຸບານຂອງຄຣິສຕະຈັກເຮັດຫຼາຍກວ່າການໃຫ້ເດັກນ້ອຍຂອງພວກເຮົາມີບ່ອນຫຼິ້ນທີ່ປອດພັຍໃນຂນະທີ່ພວກເຮົາຮຽນຮູ້ແລະນະມັສການ. ພວກເຂົາເຈົ້າຍັງໄດ້ສອນນໍາອີກ. ພາຍໃຕ້ການດູແລຂອງຄູພະແນກອະນຸບານ, ເດັກນ້ອຍຂອງພວກເຮົາຮຽນຮູ້ວ່າພຣະເຈົ້າໄດ້ຊົງສ້າງໂລກແລະຊົງດູແລພວກເຂົາເຈົ້າ. ພວກເຂົາເຈົ້າຮຽນຮູ້ວ່າພຣະເຈົ້າຊົງຮັກພວກເຂົາ, ແລະຄຣິສຕະຈັກແມ່ນສະຖານທີ່ໆພວກເຂົາເຈົ້າຖືກຮັກແພງແລະປົວລະບັດ. ພວກເຂົາເຈົ້າຮຽນຮູ້ເຖິງຄວາມສໍາຄັນຂອງຄວາມສັມພັນທະພາບທີ່ດີອີກນໍາ.

ພາຍໃນນຶ່ງນາທີ, ເດັກນ້ອຍສອງຄົນຈະໄດ້ນັ່ງຢູ່ຄຽງຂ້າງກັນ, ມີຄວາມສຸກກັບຂອງຫຼິ້ນຂອງເຂົາເຈົ້າ. ອີກນາທີຕໍ່ໄປ, ນຶ່ງໃນສອງຄົນນັ້ນຈະພະຍາຍາມຍາດຂອງຫຼິ້ນຂອງຄົນອື່ນໄປ. ຖ້າບໍ່ໄດ້ດັ່ງໃຈຂອງນາງ, ນາງຈະຕຽມພ້ອມຢ່າງເຕັມທີ່ທີ່ຈະເພີ່ມທະວີການສູ້ລົບກັນໄປສູ່ການສູ້ຮົບແບບສົງຄາມ. ບັນດາຄູຂອງເດັກນ້ອຍຂອງພວກເຮົາໃຊ້ຊ່ວງເວລານັ້ນສິດສອນບົດຮຽນທີ່ສໍາຄັນກ່ຽວກັບການແບ່ງປັນ, ກ່ຽວກັບຄວາມສຸພາບອ່ອນນ້ອມ,ແລະການແກ້ໄຂຄວາມຂັດແຍ້ງໂດຍສັນຕິວິທີ (ໃນທາງທີ່ຖືກຕ້ອງ).

ເດັກນ້ອຍໃນວັຍອະນຸບານຈໍາເປັນຕ້ອງຮຽນຮູ້ບົດຮຽນນີ້ຢ່າງແນ່ນອນ, ແຕ່ພວກເຂົາເຈົ້າບໍ່ແມ່ນໂດດດ່ຽວໃນເຣື່ອງນີ້. ບັນດາພວກຜູ້ໃຫຍ່ສາມາດໃຊ້ບົດຮຽນດຽວກັນນີ້ທີ່ພວກຄູຂອງພະແນກອະນຸບານໄດ້ສອນຢູ່ທຸກໆອາທິດ. ທ່ານຢາໂກໂບ ສະແດງໃຫ້ພວກເຮົາໄດ້ເຫັນການຕໍ່ສູ້ແລະການຂັດແຍ້ງແມ່ນຝັງເລິກຢູ່ໃນຄວາມບາບຊຶ່ງເປັນທັມມະຊາດຂອງມະນຸດພວກເຮົາ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

## 1. ຢາໂກໂບ 4:1-3

*1 ອັນໃດເປັນສາເຫດການຜິດຖຽງກັນ ແລະອັນໃດເປັນສາເຫດຂອງການທະເລາະວິວາດກັນໃນພວກເຈົ້າ ບໍ່ແມ່ນກິເລດຕັນຫາຂອງ*
*ພວກເຈົ້າຫລື ທີ່ເຮັດໃຫ້ພວກເຈົ້າຕໍ່ສູ້ກັນ. 2 ເຈົ້າທັງຫລາຍຢາກໄດ້ແຕ່ບໍ່ໄດ້ ພວກເຈົ້າຂ້າກັນ, ພວກເຈົ້າເຫິງສາກັນ, ແຕ່ບໍ່ສາມາດຈະ*
*ໄດ້ ພວກເຈົ້າຜິດຖຽງແລະທະເລາະວິວາດກັນ ພວກເຈົ້າບໍ່ມີເພາະບໍ່ໄດ້ຂໍ. 3 ເຈົ້າທັງຫລາຍຂໍແລະບໍ່ໄດ້ຮັບເພາະຂໍຜິດ ເພື່ອຈະເອົາໄປ*
*ໃຊ້ຕາມກິເລດຕັນຫາຂອງຕົນ.*

ຄວາມຂັດແຍ້ງມີຢູ່ທຸກຫົນທຸກແຫ່ງ. ມັນເກີດຂຶ້ນໃນລະດັບໂລກ, ລະດັບຊາດ, ແລະລະດັບທ້ອງຖິ່ນ. ພວກເຮົາມີປະສົບການໃນຄວາມຂັດແຍ້ງຢູ່ທີ່ທໍາງານ, ໃນຊຸມຊົນຂອງພວກເຮົາ, ໃນເຮືອນຂອງພວກເຮົາ, ແລະໃນຄຣິສຕະຈັກຂອງພວກເຮົາ. ຢ່າງໜ້າເສົ້າໃຈ, ຄວາມຂັດແຍ້ງສາມາດເກີດຂຶ້ນໄດ້ໃນກະທັ້ງຂນະທີ່ຄຣິສຕະຈັກກໍາລັງເຕີບໂຕຈະເຣີນຮຸ່ງເຮືອງ. ການຂັດແຍ້ງຢູ່ໃນຄຣິສຕະຈັກເບິ່ງຄືວ່າບໍ່ປົກກະຕິ. ເຮົາຄາດໝາຍໃຫ້ຜູ້ທີ່ເຊື່ອເຮັດຕາມແບບພຣະຄຣິດ, ແມ້ແຕ່ບັນດາຜູ້ອ່ານພຣະຄັມພີແລະຮ້ອງເພງນະມັສການກໍສາມາດຍອມແພ້ຕໍ່ແຮງຈູງໃຈທີ່ເຫັນແກ່ຕົວ(ຍຶດຕົນເອງເປັນສູນກາງ). ເຫດຜົນກໍແມ່ນດ້ວຍເຫດວ່າທຸກຄົນມີທັມມະຊາດຄວາມບາບໃນຕົວຊຶ່ງຕ້ອງໄດ້ຕໍ່ສູ້ໄປແຕ່ລະວັນ. ທັມມະຊາດຄວາມບາບຂອງພວກເຮົາມີຄວາມຢາກ(ຕັນຫາ)ໃນສິ່ງທີ່ໃຜຜູ້ນຶ່ງມີທີ່ຕົນເອງບໍ່ມີຄືເຂົາ, ແລະມັນກັບກາຍເປັນຄວາມໂລບ. ຄວາມປາຖນາອັນມີອໍານາດນີ້ທີ່ຈະໄດ້ສິ່ງທີ່ຄົນອື່ນມີ ເຮັດໃຫ້ເກີດຄວາມອຸກອັ່ງ, ຄວາມບໍ່ພໍໃຈ,

ແລະຄວາມຜິດຫວັງ, ກາຍເປັນຂໍ້ຂັດແຍ້ງທີ່ຝັງເລິກຢູ່ພາຍໃນ(ຫົວໃຈ). ພວກເຮົາສແວງຫາເພີ້ມອີກເລື້ອຍໆ (ບໍ່ມີເມືອງພໍ), ແລະໃນເມື່ອເຮົາບໍ່ໄດ້ດັ່ງໃຈ, ຄວາມວຸ້ນວາຍພາຍໃນກໍເພີ້ມຂື້ນ. ເມື່ອເວລາຜ່ານໄປ, ຄວາມຂັດແຍ້ງພາຍໃນຂອງພວກເຮົາຈະລະເບີດຂື້ນແລະແຜ່ລາມຄວາມຮຸນແຮງອອກໄປ ຊຶ່ງເປັນເຫດໃຫ້ຄົນອື່ນໄດ້ຮັບຜົນກະທົບ.

*ທ່ານເຫັນຄວາມຈິງຂອງຂໍ້ພຣະຄັມພີເຫຼົ່ານີ້ຢູ່ໃສໃນວັດທະນະທັມຂອງພວກເຮົາ?*

ທ່ານຢາໂກໂບໃຊ້ສອງຄຳເວົ້າທີ່ມີຄວາມໝາຍຄ້າຍຄືກັນຄຽງຄູ່ກັນໄປ-“ເສິກ ແລະ ສູ້” (ຂໍ້ 1)-ເພື່ອບັນລະຍາຍການລະເບີດນີ້. ການປະສົມປະສານນີ້ໄດ້ຮວບຮວມເອົາຄວາມຮຸນແຮງຂອງຂໍ້ຂັດແຍ້ງທັງໝົດຕັ້ງແຕ່ການຂັດແຍ້ງທີ່ຂົມຂື່ນໄປຈົນເຖິງການສູ້ຮົບດ້ວຍອາວຸດຢ່າງເຕັມທີ່. ບໍ່ວ່າຄວາມຂັດແຍ້ງຈະອ່ອນໂຍນຫຼືຮ້າຍແຮງ, ມັນກໍມີແຫຼ່ງທີ່ມາອັນດຽວກັນຄື: ຄວາມປາຖນາທີ່ເອົາໃຈໃສ່ກັບຕົນເອງ (<u>ເຫັນແກ່ຕົວ</u>) ແລະ ຄວາມຢາກ (<u>ຕັນຫາ</u>). ຕົ້ນຕໍຂອງບັນຫາບໍ່ແມ່ນຄວາມວຸ້ນວາຍພາຍໃນຂອງພວກເຮົາ ຫຼືຄວາມຂັດແຍ້ງທີ່ເຫັນໄດ້ຊັດເຈນຂອງພວກເຮົາກັບຄົນອື່ນ: ແຕ່ກົງກັນຂ້າມ, <u>ມັນແມ່ນຄວາມຂັດແຍ້ງທີ່ພວກເຮົາກຳລັງມີກັບພຣະເຈົ້າ</u>. ຖ້າພວກເຮົາຫາກວາງໃຈໃນພຣະເຈົ້າ, ພວກເຮົາສົມຄວນທີ່ຈະທູນຂໍຕໍ່ພຣະອົງໃນສິ່ງທີ່ພວກເຮົາ<u>ຈຳເປັນແທ້ໆ</u>(ບໍ່ແມ່ນສິ່ງທີ່ພວກເຮົາພຽງຢາກໄດ້-the needs and <u>not</u> the wants), ແລະພວກເຮົາສົມຄວນ<u>ພໍໃຈເຊື່ອໃນສິ່ງທີ່ພຣະອົງຊົງປະທານ</u>. ແຕ່ພວກເຮົາບໍ່ເຂົ້າມາຫາພຣະເຈົ້າ, ແລະເພາະວ່າພວກເຮົາບໍ່ໄດ້ທູນຂໍ, ພວກເຮົາຈຶ່ງມີຄວາມຂັດແຍ້ງພາຍໃນຊຶ່ງກັບກາຍມາເປັນຄວາມຂັດແຍ້ງກັບຄົນອື່ນ. <u>ເພື່ອທຳລາຍວົງຈອນທີ່ບໍ່ສິ້ນສຸດນີ້</u>, <u>ພວກເຮົາຕ້ອງຮຽນຮູ້ທີ່ຈະໄວ້ວາງໃຈພຣະເຈົ້າ</u> <u>ພຽງພໍທີ່ຈະທູນຂໍສິ່ງທີ່ພວກເຮົາຈຳເປັນ (the needs) ຈາກພຣະອົງ</u>.

## 2. <u>ຢາໂກໂບ 4:4-5</u>

*4 ໂອ ຄົນທີ່ຫລິ້ນຊູ້ເຮີຍ, ພວກເຈົ້າບໍ່ຮູ້ຫລືວ່າການເປັນມິດກັບໂລກກໍຄືການເປັນສັດຕູຕໍ່ພຣະເຈົ້າ ເຫດສັນນັ້ນຜູ້ໃດຢາກເປັນມິດກັບໂລກຜູ້ນັ້ນກໍເປັນສັດຕູຕໍ່ພຣະເຈົ້າ. 5ຫລືເຈົ້າທັງຫລາຍຄຶດວ່າເປັນການເປົ່າໆ ຫລື ທີ່ພຣະຄັມພີກ່າວວ່າ, “ວິນຍານທີ່ພຣະອົງໄດ້ຊົງບັນດານໃຫ້ຢູ່ໃນເຮົາທັງຫລາຍກໍປາຖນາຢ່າງແຮງກ້າ.”*

ຄວາມຄິດທີ່ເຫັນແກ່ຕົວຄືຍຶດຕົນເອງເປັນສູນກາງ (self-centered) ເປັນສິ່ງທີ່ພວກເຮົາຄາດຫວັງຈະເຫັນໃນໂລກ, ແຕ່ບໍ່ແມ່ນໃນບັນດາຜູ້ທີ່ຕິດຕາມພຣະຄຣິດ. ຄວາມໂລບດຶງພວກເຮົາອອກຈາກການຊົມຊື່ນຍິນດີກັບຄວາມພຽງພໍຂອງພຣະຄຣິດ. ໃນເມື່ອພວກເຮົາປະຕິເສດການພັກພິງ(ອາສັຍ)ໃນພຣະເຈົ້າ, ພວກເຮົາກຳລັງສະແດງຄວາມເປັນສັດຕູຕໍ່ພຣະອົງ. ທ່ານຢາໂກໂບໄດ້ໃຊ້ຄຳເວົ້າທີ່ຮຸນແຮງເພື່ອເນັ້ນໜັກເຖິງຄວາມຮ້າຍແຮງຂອງ <u>*ຄວາມງຽບ*</u>, <u>*ບໍ່ຢຸດຢັ້ງ*</u>, <u>*ທຳລາຍລ້າງ*</u> ຈິດໃຈແຫ່ງຄວາມໂລບ ແລະແນວຄິດຈິດໃຈທາງໂລກ. ແທນທີ່ຈະຮ້ອງຜູ້ອ່ານຂອງເພິ່ນ: ພີ່ນ້ອງທີ່ຮັກແພງ ຕາມປົກກະຕິໃນຈົດໝາຍຂອງເພິ່ນ, ທ່ານຢາໂກໂບໄດ້ຮ້ອງພວກເຂົາເຈົ້າດຽວນີ້ວ່າ “<u>*ຄົນທີ່ຫລິ້ນຊູ້ເຮີຍ*</u>” (ຂໍ້ 4). ດ້ວຍການປ່ຽນແປງໃນວິທີທີ່ເພິ່ນໄດ້ເວົ້າກັບຜູ້ອ່ານຂອງເພິ່ນ, ຢາໂກໂບໄດ້ປ່ຽນຈາກສຽງຂອງການສອນສາສນາສາດເປັນສຽງຂອງການທຳນວາຍ. ເມື່ອຢາໂກໂບເອີ້ນຜູ້ອ່ານຂອງທ່ານວ່າເປັນການຫລິ້ນຊູ້, ລາວໄດ້ໃຊ້ພາສາແບບດຽວກັນກັບຜູ້ພະຍາກອນຊາວຢິວທີ່ໃຊ້ເພື່ອຕຳໜິຜູ້ຄົນກ່ຽວກັບຄວາມບໍ່ສັດຊື່ທາງຝ່າຍວິນຍານຂອງພວກເຂົາເຈົ້າ. ເອຊາຢາ(ອຊຢ 1:21), ເຢເຣມີຢາ (ຢຣມ 3:1-10), ເອເຊກຽນ (ອຊກ 16:23-43) ແລະ ໂຮເຊຢາ (ຮຊຢ 9:1) ທັງຫມົດທີ່ກ່າວເຖິງປະເທດຊາດທີ່ບໍ່ສັດຊື່ຂອງອິສຣາເອນແລະຢູດາເປັນຊາດແຫ່ງການຫລິ້ນຊູ້. ເຊັ່ນດຽວກັບບັນດາພວກທຳນວາຍທັງຫຼາຍກ່ອນໜ້າເພິ່ນ, ຢາໂກໂບໄດ້ເວົ້າໂດຍກົງ ແລະກົງໄປກົງມາຕໍ່ຜູ້ຄົນ.

ເຊັ່ນດຽວກັບການຫລິ້ນຊູ້, ຄວາມໂລບທຳລາຍຄວາມໄວ້ວາງໃຈ. ມັນທຳລາຍຄວາມໄວ້ວາງໃຈໃນພຣະເຈົ້າເຊັ່ນດຽວກັນກັບປະຊາຊົນຂອງພຣະອົງ. ຄວາມໂລບ ແລະ ການຫລິ້ນຊູ້ມີສິ່ງອື່ນທີ່ຄືກັນນັ້ນຄື: ພວກມັນທັງສອງສົ່ງຜົນກະທົບຕໍ່ຊີວິດຂອງຜູ້ທີ່ຮູ້ເທົ່າບໍ່ເຖິງການ (ໄຮ້ດຽງສາ). <u>ຄວາມຂັດແຍ້ງຊຶ່ງເປັນຜົນມາຈາກຄວາມໂລບທຳລາຍຄົນອື່ນ</u> <u>ດັ່ງດຽວກັບ</u>ສອດຄ່ອງກັບຄຳສອນຂອງພຣະເຢຊູທີ່ວ່າ *“ບໍ່ມີຜູ້ໃດສາມາດຮັບໃຊ້ນາຍສອງຄົນໄດ້”* (ມທ 6:24), ຢາໂກໂບໄດ້ເຕືອນວ່າບັນດາຜູ້ທີ່ເຊື່ອທີ່ມີຄວາມໂລບບໍ່ສັດຊື່ຕໍ່ພຣະເຈົ້າ; ການສແວງຫາສິ່ງຂອງທາງໂລກ "*ຄືການເປັນສັດຕູຕໍ່ພຣະເຈົ້າ*" (ຂໍ້. 4). ແທນທີ່ຈະເພິ່ງພາໃນພຣະອົງ ແລະ ໄວ້ວາງໃຈໃນພຣະອົງ

ສຳລັບສິ່ງທີ່ພວກເຂົາເຈົ້າຈຳເປັນ(needs), ພວກເຂົາເຈົ້າໄດ້ຖືກຂາຍໝົດແລ້ວໃຫ້ກັບລັດທິວັດຖຸນິຍົມ. ການດີ້ນລົນແລະຄວາມບໍ່ພໍໃຈພາຍໃນຂອງພວກເຂົາພຽງແຕ່ນຳໄປສູ່ການຕໍ່ສູ້ຕໍ່ໄປ: ການສູ້ຣົບກັບຄົນອື່ນແລະສູ້ຣົບກັບພຣະເຈົ້າ. ໃນຂນະທີ່ບາງຄົນອາດຄິດວ່າເຂົາເຈົ້າສາມາດເຈົ້າຊູ້(ງາມ)ກັບໂລກແລະຍັງສັດຊື່ຕໍ່ພຣະເຈົ້າ, ທ່ານຢາໂກໂບ ໄດ້ລົບລ້າງແນວຄິດນັ້ນ. ບໍ່ມີການກຸ້ວພາຣາສີ ໃດໆທີ່ບໍ່ເປັນອັນຕະລາຍກັບໂລກ. ມັນເປັນໄປບໍ່ໄດ້ທີ່ຈະເວົ້າກັບໂລກວ່າ "ພວກເຮົາເປັນພຽງເພື່ອນກັນ." ທັດສະນະຄະຕິດັ່ງກ່າວເຮັດໃຫ້ຜູ້ມີຄວາມເຊື່ອຕົກຢູ່ໃນກຸ່ມຂອງຜູ້ຫຼີ້ນຊູ້ທາງວິນຍານ. **ການຄິດຢ່າງຊາວໂລກຈະດຶງພວກເຮົາອອກຈາກພຣະຄຣິດສເມີຕລອດໄປ.**

*ທ່ານຈະບັນລະຍາຍມິດຕະພາບກັບຊາວໂລກໂດຍວິທີໃດ?*

## 3. ຢາໂກໂບ 4:6-10

[6] *ແຕ່ພຣະອົງໄດ້ຊົງປະທານພຣະຄຸນເພີ່ມຂຶ້ນອີກ ເຫດສັນນັ້ນພຣະຄັມພີຈຶ່ງກ່າວວ່າ, "ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງ ແຕ່ຊົງປະທານ*
*ພຣະຄຸນແກ່ຄົນທີ່ຖ່ອມໃຈລົງ."* [7] *ເຫດສັນນັ້ນເຈົ້າທັງຫລາຍຈົ່ງນ້ອມໃຈຍອມຟັງພຣະເຈົ້າ ຈົ່ງຕໍ່ສູ້ກັບມານແລະມັນຈະໜີຈາກພວກເຈົ້າ*
*ໄປ.* [8] *ເຈົ້າທັງຫລາຍຈົ່ງເຂົ້າໃກ້ພຣະເຈົ້າ ແລະພຣະອົງຈະສະເດັດມາໃກ້ພວກເຈົ້າ. ຄົນບາບທັງຫລາຍເອີຍ, ຈົ່ງຊຳລະມືໃຫ້ສະອາດ,*
*ແລະຄົນສອງໃຈຈົ່ງຊຳລະໃຈຂອງຕົນໃຫ້ບໍຣິສຸດ.* [9] *ຈົ່ງເປັນທຸກໂສກເສົ້າ, ຈົ່ງຮ້ອງໄຫ້ແລະຮ່ຳໄຮ ໃຫ້ການຫົວຂອງຕົນກັບກາຍເປັນ*
*ການໂສກເສົ້າ ແລະໃຫ້ຄວາມຍິນດີກັບກາຍເປັນຄວາມເສົ້າໝອງ.* [10] *ເຈົ້າທັງຫລາຍຈົ່ງຖ່ອມໃຈລົງຕໍ່ພຣະພັກອົງພຣະຜູ້ເປັນເຈົ້າ ແລະ*
*ພຣະອົງຈະຊົງຍົກຊູພວກເຈົ້າຂຶ້ນ.*

**ພວກເຮົາມີຄວາມຫວັງ!** ການເປັນສັດຕູກັບພຣະເຈົ້າບໍ່ຈຳເປັນຕ້ອງດຳເນີນສືບຕໍ່ໄປ. ຢາໂກໂບໄດ້ໃຫ້ຄຳແນະນຳກ່ຽວກັບວິທີທີ່ຈະຢຸດສົງຄາມ ແລະເປັນເພື່ອນກັບພຣະເຈົ້າ. ການຟື້ນຟູມິດຕະພາບຈະເລີ້ມຕົ້ນເມື່ອປະຊາຊົນຂອງພຣະເຈົ້າເຊົາເຮັດຄືວ່າພຣະອົງເປັນສັດຕູຂອງເຂົາເຈົ້າ ແລະ**ຍອມຈຳນົນ**ຢູ່ໃຕ້ການດູແລ ແລະ ສິດອຳນາດຂອງພຣະອົງ. ພຣະເຈົ້າບໍ່ເຄີຍເປັນບັນຫາ; ທັມມະຊາດບາບຂອງພວກເຮົາແມ່ນບັນຫານັ້ນ. ວິທີແກ້ໄຂແມ່ນໃຫ້ຢຸດເຊົາ ຍອມຈຳນົນຕໍ່ຄວາມຢາກອາຫານທີ່ບໍ່ອີ່ມໜຳສຳລານຂອງທັມມະຊາດບາບຂອງເຮົາ ແລະ **ເລີ້ມຍອມຈຳນົນຕໍ່ພຣະເຈົ້າໂດຍເພິ່ງພາ(ພັກພິງ)ໃນພຣະອົງ.**

ແນ່ນອນ, ນັ້ນບໍ່ໄດ້ໝາຍຄວາມວ່າການທົດລອງ ແລະ ຄວາມຍາກລຳບາກໄດ້ສິ້ນສຸດລົງ. ຊາຕານຈະບໍ່ດີໃຈໃນເມື່ອພວກເຮົາຢຸດຕິການຍອມຈຳນົນຕໍ່ທັມມະຊາດບາບຂອງພວກເຮົາ. ດັ່ງນັ້ນ, ເມື່ອໃດພວກເຮົາມີປະສົບການໃນການທົດລອງແລະມີຄວາມຮູ້ສຶກເຖິງການໂຈມຕີຂອງຊາຕານເຮົາຕ້ອງຕໍ່ຕ້ານມັນ. ພວກເຮົາບໍ່ໄດ້ໂຕ້ຖຽງ ຫຼືໂຕ້ວາທີ; ພວກເຮົາ "*ຕໍ່ສູ້ກັບມານ*" (ຂໍ້. 7). ພວກເຮົາບໍ່ໄດ້ແລ່ນໜີອອກຈາກຊາຕານ. ພຣະຄັມພີໄດ້ຮຽກເອີ້ນພວກເຮົາໃຫ້ "ລະຖິ້ມ" ຈາກຫຼາຍສິ່ງຫຼາຍຢ່າງ-ຄວາມບາບເຊັ່ນການປະພຶດຜິດສິລທັມທາງເພດ (1 ກຣທ 6:18), ການບູຊາຮູບປັ້ນຫຼືຮູບເຄົາຣົບ (1 ກຣທ 10:14), ການອິດສາຣິສຍາ, ການຮັກເງິນ, ແລະຄວາມຜິດບາບອື່ນໆ (1 ທມທ 6:4-11)-ແຕ່ທ່ານຢາໂກໂບໄດ້ຮຽກເອີ້ນໃຫ້ພວກເຮົາຢືນຢູ່ຢ່າງໝັ້ນຄົງ ແລະຕ້ານທານຝູງຜີມານ. ເມື່ອພວກເຮົາເຮັດດັ່ງນັ້ນ, ພວກມັນກໍຈະຜ່າຍໜີຈາກພວກເຮົາ.

*ການຫຍັບເຂົ້າໃກ້ຊິດພຣະເຈົ້ານັ້ນມີລັກສນະແນວໃດ?*

ພວກເຮົາອະທິຖານດ້ວຍຄວາມຖ່ອມຕົວ, ແລະພວກເຮົາກັບໃຈຈາກບາບຂອງພວກເຮົາ. ກ່ອນໜ້ານີ້, ທ່ານຢາໂກໂບໄດ້ເຕືອນພວກເຮົາວ່າພວກເຮົາບໍ່ສາມາດສົງສັຍແລະເປັນຄົນສອງໃຈເມື່ອເຮົາອະທິຖານ ແລະ "ຢ່າໃຫ້ຄົນນັ້ນຄຶດວ່າຕົນຈະໄດ້ຮັບສິ່ງໃດຈາກພຣະຜູ້ເປັນເຈົ້າ" (ຢາໂກໂບ 1:7-8); ບັດນີ້ເພິ່ນໄດ້ຊີ້ເຖິງຄວາມສອງໃຈໃນແງ່ຂອງຄວາມພະຍາຍາມທີ່ຈະດຳເນີນຊີວິດສຳລັບທັງ ພຣະເຈົ້າ ແລະ ສິ່ງຂອງໆໂລກ. ຫົວໃຈຂອງການກັບໃຈ ແລະ ຄວາມຖ່ອມຕົວແມ່ນຈຳເປັນເມື່ອພວກເຮົາອະທິຖານ, ດ້ວຍເຫດນີ້ຢາໂກໂບຈຶ່ງເວົ້າວ່າ, "ເຈົ້າທັງຫຼາຍຈົ່ງເຂົ້າໃກ້ພຣະເຈົ້າ ແລະພຣະອົງຈະສະເດັດມາໃກ້ພວກເຈົ້າ ຄົນບາບທັງຫຼາຍເອີຍ, ຈົ່ງຊຳຣະມືໃຫ້ສະອາດ ແລະຄົນສອງໃຈຈົ່ງຊຳຣະໃຈຂອງຕົນໃຫ້ບໍຣິສຸດ. (ຢກບ 4:8).

ດ້ວຍມີທີ່ສະອາດແລະຫົວໃຈອັນບໍຣິສຸດ, ເຮົາເຫັນຄວາມບາບຂອງເຮົາດ້ວຍຄວາມແຈ່ມແຈ້ງຂື້ນໃໝ່. ພວກເຮົາເລີ້ມຮ້ອງໄຫ້. ແຕ່ຂອບພຣະຄຸນ, ເມື່ອເຮົາທຸກໂສກໃນຄວາມຜິດບາບຂອງເຮົາ, ເຮົາໄດ້ຮັບການເລົ້າໂລມຈາກພຣະເຈົ້າ (ມທ 5:4) ເມື່ອພຣະອົງຊົງຫຍັບເຂົ້າມາໃກ້ເຮົາ. **<u>ພຣະອົງຊົງຕອບສນອງດ້ວຍພຣະຄຸນອັນບໍ່ມີຂອບເຂດຂອງພຣະອົງ</u>.**

*ກຸ່ມຂອງພວກເຮົາມີບົດບາດອັນໃດແດ່ໃນການຊ່ວຍທ່ານຍອມຈຳນົນຕໍ່ພຣະເຈົ້າແລະຕ້ານກັບມານຮ້າຍ?*

## ນຳໃຊ້ໃນຊີວິດ

ທ່ານຈະດຳເນີນຊີວິດຕາມຄວາມຈິງຂອງພຣະຄັມພີຊ່ວງນີ້ ແລະຍືນຢູ່ຢ່າງມີຊັຍໃນພຣະຄຣິດໂດຍວິທີໃດ? ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງສາຣະພາບ.** ຖ້າພຣະຄຳໃນຊ່ວງນີ້ໄດ້ຕັດສິນລົງໂທດທ່ານດ້ວຍເຫດຜົນຂອງການເຫັນແກ່ຕົວ, ຂອງຄວາມໂລບ, ຫຼື ຂອງທັສນະຄະຕິຂອງໂລກ, ສາຣະພາບແລະຖິ້ມໃຈເກົ່າເອົາໃຈໃຫມ່. ຈົ່ງໃຊ້ພຣະຄຳເພງສັຣເສີນບົດທີ່ 51 ເພື່ອເປັນໂຄງສ້າງໃນການອະທິຖານຂອງທ່ານ.

- **ຈົ່ງຢຸດຕັ້ງໂຕໃໝ່.** ຈົ່ງໃຊ້ເວລາເຄິ່ງມື້(12 ຊົ່ວໂມງ)ໃນການອະທິຖານ. ເລີ້ມຕົ້ນດ້ວຍການສາຣະພາບແລະການຍອມຈຳນົນຕໍ່ພຣະເຈົ້າ. ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ຊົງຊ່ວຍເຫຼືອທ່ານໃຫ້ວາງແຜນການປະຕິບັດເພື່ອຫຼີກເວັ້ນຈາກການທົດລອງຂອງລັດທິວັດຖຸນິຍົມ. ຈົ່ງສຳຫຼວດເບິ່ງຜົນກະທົບຂອງສິ່ງທີ່ທ່ານອ່ານ ຫຼື ເບິ່ງໃນການໜູນໃຈຂອງແນວຄວາມຄິດແບບຊາວໂລກ.

- **ຈົ່ງກຳຈັດຊຳຣະ.** ຈົ່ງຈົດບັນທຶກຊັບສິ່ງຂອງທີ່ເປັນກັມມະສິດຂອງທ່ານ ຊຶ່ງສະທ້ອນເຖິງແນວຄິດຝ່າຍໂລກຫຼືທີ່ໄດ້ຊື້ມາດ້ວຍຫົວໃຈຂອງລັດທິວັດຖຸນິຍົມ. ນີ້ອາດຈະເຮັດສຳເລັດໄດ້ດ້ວຍຄວາມຮ່ວມມືຈາກສາມີຫຼືພັລຍາຂອງທ່ານ ຫຼື ສະມາຊິກຂອງຄອບຄົວ, ແຕ່ຈົ່ງພິຈາຣະນາກຳຈັດສິ່ງເຫຼົ່ານັ້ນອອກຈາກຊີວິດຂອງທ່ານ. ຈົ່ງຈຳໜ່າຍ(ຂາຍ)ມັນອອກໄປຖ້າຈຳເປັນ ແລະເອົາເງິນທີ່ຂາຍໄດ້ນັ້ນໄປອຸປຖັມຄ້ຳຊູພັນທະກິຈຮ່ວມກັບຄຣິສຕະຈັກຂອງທ່ານ.

ເດັກນ້ອຍບໍ່ໄດ້ແມ່ນຈຳພວກດຽວທີ່ຈຳເປັນຕ້ອງຮຽນເພື່ອເອົາຊນະການກະຕຸ້ນແຮງໃຈຂອງພວກເຂົາເຈົ້າ. ໃນຫຼາຍທາງ, ໃນເມື່ອພວກເຮົາເຖົ້າແກ່ໄປ, ພວກເຮົາສຶກສາຮ່ຳຮຽນໃນການໄລ່ຕາມວັດຖຸສິ່ງຂອງທີ່ພວກເຮົາຢາກໄດ້ເພີ້ມອີກ (<u>ຕັນຫາຄືຄວາມບໍ່ມີເມືອງພໍ</u>). ແຕ່ໃນນາມພວກເຮົາເປັນລູກຂອງພຣະເຈົ້າ, ມັນມີທາງທີ່ດີກວ່ານັ້ນ: **<u>ພວກເຮົາສາມາດຍອມຈຳນົນຕໍ່ພຣະເຈົ້າ</u>.**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ** SSK.